ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 27257/ຍທຂ

ນະຄອນຫລວງວຽງຈັນ, ວັນທີ 08 ທັນວາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມນໍ້າປະປາ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບ ເລກທີ 295 /ນຍ, ລົງວັນທີ 04 ກັນຍາ 2017;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 2378/ຍທຂ.ກຈພ,ລົງວັນທີ 06/12/17
- ອີງຕາມ ການເຫັນດີເປັນເອກະພາບຂອງຄະນະປະຈຳພັກກະຊວງ ຄັ້ງວັນທີ 30 ຕຸລາ 2017 ;

**ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງ ກົມນໍ້າປະປາ ເພື່ອເປັນບ່ອນອີງ ທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວ ແນໃສ່ຈັດຕັ້ງປະຕິບັດວຽກງານນໍ້າປະປາ ແລະ ສຸຂາພິບານ ໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມນໍ້າປະປາ ຂຽນເປັນ ຕົວອັກສອນຫຍໍ້ວ່າ “ກນປ” ຂຽນເປັນພາສາຝຣັ່ງ Département de l'Eau Potable (DEP) ແມ່ນກົງຈັກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ມີພາລະບົດບາດ ເປັນເສນາທິການ ໃຫ້ລັດຖະມົນຕີ ແລະ ຮອງລັດຖະມົນຕີ ໃນການຄົ້ນຄວ້າ, ວາງແຜນ ແລະ ຄຸ້ມຄອງມະຫາພາກວຽກງານ ນໍ້າປະປາ ແລະ ສຸຂາພິບານ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຄົ້ນຄວ້າ, ເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານນໍ້າປະປາ ແລະ ສຸຂາພິບານ ໃຫ້ລະອຽດເລິກເຊິ່ງ;



ພ.ສ

2. ສ້າງແຜນຍຸດທະສາດ ແລະ ນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດໃນແຕ່ລະໄລຍະ ແລະ ຊີ້ນໍາໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານນໍ້າປະປາ ແລະ ສຸຂາພິບານ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ເພື່ອນໍາສະເໜີຕໍ່ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ຮັບຮອງ;
3. ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ກໍຄືຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບ ວຽກງານນໍ້າປະປາ ແລະ ສຸຂາພິບານ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃຫ້ປະສິດທິພາບ ແລະ ປະສິດທິຜົນສູງ;
4. ຄົ້ນຄວ້າຮ່າງ ນະໂຍບາຍ, ກົດໝາຍ, ລະບຽບການ, ຂໍ້ກໍານົດກົດລະບຽບ, ກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ກ່ຽວກັບ ວຽກງານ ນໍ້າປະປາ ແລະ ສຸຂາພິບານ ລວມທັງ ວຽກງານດັດສົມທຸລະ ກິດນໍ້າປະປາ;
5. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານນໍ້າປະປາ ແລະ ສຸຂາພິບານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ເພື່ອກໍ່ສ້າງ, ບໍາລຸງ ແລະ ຍົກລະດັບ ພະນັກງານ ພ້ອມທັງ ຍາດແຍ່ງ ການຊ່ວຍເຫຼືອລ້າ ແລະ ກູ້ຢືມ ເຂົ້າ ໃນການພັດທະນາ;
6. ຄຸ້ມຄອງ, ຕິດຕາມກວດກາ ແລະ ກວດການ ການເຄື່ອນໄຫວຂອງ ບັນດາພະແນກ, ຫົວໜ່ວຍວິຊາການ ແລະ ໂຄງການ ທີ່ຂຶ້ນກັບກົມ; ກວດກາ, ປະເມີນຜົນ, ຊຸກຍູ້ ແລະ ຊ່ວຍໜູນ ຂະແໜງ ສາຍຕັ້ງຂອງຕົນ ຢູ່ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ວຽກງານຕ່າງໆ ໃຫ້ ຖືກຕ້ອງ ແລະ ໄດ້ຮັບຜົນດີ;
7. ຄຸ້ມຄອງການພັດທະນາ, ປັບປຸງ ແລະ ຂະຫຍາຍ ລະບົບໂຄງລ່າງ ນໍ້າປະປາ ແລະ ສຸຂາພິບານ ຢູ່ຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
8. ດັດສົມການດໍາເນີນທຸລະກິດ ຂອງຜູ້ບໍລິການນໍ້າປະປາ ຕາມກົດໝາຍ ແລະ ລະບຽບການ, ກໍານົດໝາຍ ເຕັກນິກ ແລະ ມາດຕະຖານເຕັກນິກ, ຕົວຊີ້ວັດຜົນການປະຕິບັດງານ ທີ່ກະຊວງ ວາງອອກ;
9. ຄຸ້ມຄອງ ແລະ ນໍາໃຊ້ ງົບປະມານ ທີ່ລັດຖະບານອະນຸມັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
10. ເກັບກໍາ ແລະ ສ້າງຖານຂໍ້ມູນ ທາງດ້ານສະຖິຕິ ແລະ ຂ່າວສານ ເພື່ອຄຸ້ມຄອງ ແລະ ນໍາໃຊ້ເຂົ້າໃນການ ວາງແຜນ ແລະ ພັດທະນາຂະແໜງຕົນ;
11. ຂຶ້ນແຜນກໍານົດ, ສຶກສາອົບຮົມ, ບໍາລຸງຍົກລະດັບ, ສັບຊ້ອນ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍຕໍ່ ພະນັກງານໃນຂະແໜງຕົນ ຕາມນະໂຍບາຍ ຂອງພັກ ແລະ ລັດຖະບານ;
12. ຄົ້ນຄວ້າ ສົ່ງເສີມ ຫົວຄິດປະດິດສ້າງ ແລະ ການນໍາໃຊ້ຄວາມກ້າວໜ້າ ທາງດ້ານ ເຕັກນິກວິຊາການ ແລະ ເຕັກໂນໂລຊີ ທີ່ເໝາະສົມ ເຂົ້າໃນຂະແໜງຕົນ;
13. ຄົ້ນຄ້ວາ ປະກອບຄໍາເຫັນທາງດ້ານວິຊາການ ກ່ຽວກັບການລົງທຶນ, ການສ້າງຕັ້ງ, ການສືບຕໍ່ ຫຼື ຫຍຸບເລີກ ບັນດາຫົວໜ່ວຍທຸລະກິດ ທີ່ຂຶ້ນກັບຂະແໜງຕົນ;
14. ຊຸກຍູ້ ແລະ ສົ່ງເສີມ ຫົວໜ່ວຍທຸລະກິດ ໃນຂະແໜງຕົນ ໃນການດໍາເນີນທຸລະກິດ ໃຫ້ຖືກຕ້ອງ ຕາມ ກົດໝາຍ ແລະ ລະບຽບການ ຢ່າງມີ ປະສິດທິພາບ, ປະສິດທິຜົນ ແລະ ສາມາດແຂ່ງຂັນໄດ້;
15. ຊຸກຍູ້, ສົ່ງເສີມ ແລະ ສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍ ໃຫ້ແກ່ ທຸກພາກສ່ວນເສດຖະກິດ ໃນ ການລົງທຶນພັດທະນາ ລວມເຖິງການ ກໍ່ສ້າງ, ຕິດຕັ້ງ, ປັບປຸງ ແລະ ຂະຫຍາຍລະບົບໂຄງລ່າງ ນໍ້າປະປາ ແລະ ສຸຂາພິບານ ພ້ອມທັງໃຫ້ການບໍລິການ ແກ່ປະຊາຊົນ ທັງຢູ່ຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານ ຊົນນະບົດ ດ້ວຍຮູບແບບການລົງທຶນທີ່ເໝາະສົມ;

16. ສະຫຼຸບ, ຕີລາຄາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນການ ແລະ ງົບປະມານ ກ່ຽວກັບ ວຽກງານນໍ້າປະປາ ແລະ ສຸຂາພິບານ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນໍາ, ຕາມກົດໝາຍ ແລະ ລະບຽບການກໍານົດ.

**ມາດຕາ 4 ຂອບເຂດສິດ**

1. ພົວພັນ, ປະສານສົມທົບ ແລະ ເຊີນພາກສ່ວນທີ່ກ່ຽວຂ້ອງ ຂອງອົງການຈັດຕັ້ງ ພັກ-ລັດ, ມະຫາຊົນ ແລະ ສັງຄົມ ທັງສູນກາງ ແລະ ທ້ອງຖິ່ນ ມາປຶກສາຫາລື ເພື່ອປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງ ກົມ ໃຫ້ສໍາເລັດຜົນເປັນຢ່າງດີ;
2. ກວດກາ ແລະ ກວດການ ການເຄື່ອນໄຫວຮອບດ້ານ ຂອງບັນດາພະແນກ, ຫົວໜ່ວຍວິຊາການ ແລະ ໂຄງການ ທີ່ຂຶ້ນກັບກົມ; ກວດກາ ແລະ ກວດການ ການເຄື່ອນໄຫວດ້ານວິຊາການ ຂອງຂະແໜງສາຍຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດ ໃນຂະແໜງຕົນ;
3 ສະເໜີ ແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ເລື່ອນຊັ້ນ, ຍ້ອງຍໍ, ປະຕິບັດວິໃນ ແລະ ປົດຕໍາແໜ່ງ ລັດຖະກອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ບົນພື້ນຖານການເຫັນດີເປັນເອກກະພາບ ຂອງກົມຈັດຕັ້ງ ແລະ ພະນັກງານ;
4 ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ບົດລາຍງານ ຜົນການປະຕິບັດງານປະຈໍາປີຂອງ ຫົວໜ່ວຍທຸລະກິດນໍ້າປະປາ ແລະ ສຸຂາພິບານ ລວມທັງຜົນສໍາເລັດ ທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ຫົວຄິດປະດິດສ້າງ;
5 ສະເໜີ ປັບປຸງ, ດັດແປງ ຫຼື ລົບລ້າງ ລະບຽບການ, ກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ເຫັນວ່າບໍ່ສອດຄ່ອງ; ອອກ ຄໍາແນະນໍາ ແລະ ແຈ້ງການ ດ້ານວິຊາສະເພາະ ຕໍ່ຂະແໜງ ສາຍຕັ້ງຂອງຕົນຢູ່ ທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6 ສະເໜີ ສ້າງຕັ້ງ, ປັບປຸງ ຫຼື ລົບລ້າງ ໂຄງປະກອບກົງຈັກ ແລະ ຕໍາແໜ່ງງານ ທີ່ຂຶ້ນກັບ ສິດຄຸ້ມຄອງຂອງ ຕົນເພື່ອໃຫ້ສອດຄ່ອງກັບໜ້າທີ່ຄວາມຮັບຜິດຊອບໃນແຕ່ລະໄລຍະ;
7 ພົວພັນ, ເຈລະຈາ, ເຊັນສັນຍາ ອະນຸສັນຍາ ຫຼື ຂໍ້ຜູກພັນ ກັບພາກສ່ວນຕ່າງໆ ຢູ່ ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
8 ນໍາໃຊ້ ງົບປະມານ, ວັດຖຸອຸປະກອນ, ເຄື່ອງມື ແລະ ຍານພາຫະນະ ຕາມການອະນຸມັດ ຂອງກະຊວງ;
9 ປະຕິບັດສິດອື່ນ ຕາມການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນໍາ, ຕາມກົດໝາຍ ແລະ ລະບຽບການກໍານົດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມນໍ້າປະປາ ປະກອບມີ:

1. ພະແນກ ຈັດຕັ້ງ-ບໍລິຫານ;
2. ພະແນກ ກວດກາ;

3. ພະແນກ ແຜນການ ແລະ ການຮ່ວມມື;
4. ພະແນກ ນໍ້າປະປາ;
5. ພະແນກ ສຸຂາພິບານ;
6. ພະແນກ ດັດສົມ ທຸລະກິດນໍ້າປະປາ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

1. ຫົວໜ້າກົມ ຈໍານວນ 01 ທ່ານ ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີຜູ້ຊີ້ນໍາ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມ.

   ໃນກໍລະນີຕິດຂັດ ຫົວໜ້າກົມຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງເປັນຜູ້ຮັກສາການແທນ;
2. ຮອງຫົວໜ້າກົມຈໍານວນໜຶ່ງ ຊ່ວຍຫົວໜ້າກົມໃນການຊີ້ນໍາ ຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍຂອງຫົວໜ້າກົມ; ຮັບຜິດຊອບຕໍ່ຫົວໜ້າກົມກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານທີ່ຕົນຊີ້ນໍາ.

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາແທນນັ້ນໃຫ້ຫົວໜ້າກົມພາຍຫລັງກັບມາປະຈໍາການ.
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ;

   ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

## ໝວດທີ 4
### ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ຂອງພະແນກ ຈັດຕັ້ງ-ບໍລິຫານ**

1. ຄົ້ນຄວ້າປັບປຸງ ໂຄງປະກອບກົງຈັກ; ຂຶ້ນແຜນກໍານົດ, ບໍາລຸງ-ຍົກລະດັບ, ສັບຊ້ອນ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນ;
2 ຄຸ້ມຄອງ ວຽກງານ ບໍລິຫານ, ພິທີການ, ສາລະບັນ, ເລຂານຸການ; ຂຶ້ນແຜນວຽກ ພ້ອມທັງສະຫຼຸບສັງລວມ ປະຈໍາ ອາທິດ ແລະ ເດືອນ;
3 ຄຸ້ມຄອງ ວຽກງານ ສະໜອງ ວັດຖຸ, ອຸປະກອນ ແລະ ເຄື່ອງຮັບໃຊ້ຫ້ອງການ, ຄຸ້ມຄອງ ແລະ ປົກປັກຮັກສາ ສໍານັກງານ, ຍານພາຫະນະ ແລະ ຊັບສົມບັດທັງໝົດ ທີ່ຂຶ້ນກັບການຄຸ້ມຄອງຂອງກົມ;
4 ໂຄສະນາເຜີຍແຜ່ ວຽກງານ ແລະ ການເຄື່ອນໄຫວຂອງກົມ;
5. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະພັກ ຄະນະກົມ.

**ມາດຕາ 8 ໜ້າທີ່ຂອງພະແນກ ກວດກາ**

1 ຕິດຕາມກວດກາ ແລະ ກວດການ ການເຄື່ອນໄຫວຮອບດ້ານ ຂອງບັນດາ ພະແນກ, ຫົວໜ່ວຍວິຊາການ ແລະ ໂຄງການ ທີ່ຂຶ້ນກັບກົມ;
2 ຕິດຕາມກວດກາ ການປະມູນຈັດຊື້-ຈັດຈ້າງ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງບັນດາພະແນກ ແລະ ໂຄງການ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ;

3 ຄົ້ນຄວ້າ ແລະ ສະເໜີວິທີການ ແລະ ມາດຕະການໃນການແກ້ໄຂ ຕໍ່ຂໍ້ສະເໜີ ແລະ ຄຳຮ້ອງຟ້ອງ ກ່ຽວກັບ ວຽກງານ ແລະ ການກະທຳຂອງພະນັກງານ-ລັດຖະກອນ ພາຍໃນກົມ;

4 ປະສານສົມທົບກັບພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ກວດກາ ແລະ ກວດການ ການເຄື່ອນໄຫວທາງດ້ານວິຊາການ ຂອງຂະແໜງສາຍຕັ້ງ ແລະ ຫົວໜ່ວຍທຸລະກິດ ໃນຂະແໜງຕົນ.

5. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ຂອງພະແນກ ແຜນການ ແລະ ການຮ່ວມມື**

1 ສ້າງແຜນຍຸດທະສາດ, ແຜນການ ແລະ ງົບປະມານ ສຳລັບການພັດທະນາຂະແໜງຕົນ ແລະ ສະຫຼຸບ, ຕີລາຄາ ຄວາມຄືບໜ້າ ແລະ ຜົນສຳເລັດ ໃນການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະ;

2 ຂື້ນແຜນ ແລະ ຄຸ້ມຄອງ ການນຳໃຊ້ງົບປະມານ ແລະ ກອງທຶນພັດທະນານ້ຳປະປາ ແລະ ສຸຂາພິບານ ທີ່ໄດ້ຮັບອະນຸມັດ ພ້ອມທັງຄຸ້ມຄອງວຽກງານບັນຊີ-ການເງິນ ຂອງກົມ ແລະ ວຽກງານສະຖິຕິທົ່ວຂະແໜງຕົນ;

3 ຕິດຕາມ ກວດກາ ວຽກງານ ງົບປະມານ ແລະ ບັນຊີ-ການເງິນ ຂອງບັນດາ ໂຄງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

4 ຄຸ້ມຄອງ ວຽກງານຮ່ວມມືກັບ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;

5 ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງພະແນກ ນ້ຳປະປາ**

1. ຄົ້ນຄວ້າຫັນແນວທາງ ນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບ ລະບົບໂຄງລ່າງ ນ້ຳປະປາຢູ່ຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃນຂອບເຂດທົ່ວປະເທດ ໃຫ້ກາຍເປັນ ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດ ໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ແລະ ມີຄຸນນະພາບສູງ;

2 ຄົ້ນຄວ້າຮ່າງ ກົດໝາຍ, ລະບຽບການ, ຂໍ້ກຳນົດກົດລະບຽບ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ, ຕົວຊີ້ວັດຜົນການດຳເນີນງານ ກ່ຽວກັບວຽກງານນ້ຳປະປາ ພ້ອມທັງ ໂຄສະນາເຜີຍແຜ່ ແລະ ສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ເຂົ້າໃນການ ວາງແຜນ, ຄຸ້ມຄອງ, ກໍ່ສ້າງ, ດຳເນີນງານ ແລະ ບົວລະບັດຮັກສາ ລະບົບນ້ຳປະປາ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃນຂອບເຂດທົ່ວປະເທດ;

3 ຄຸ້ມຄອງ ໂຄງການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍ ລະບົບໂຄງລ່າງນ້ຳປະປາໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ;

4 ຕິດຕາມກວດກາ, ຕີລາຄາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການກໍ່ສ້າງລະບົບນ້ຳປະປາ;

5 ກວດກາ, ປະກອບຄຳເຫັນ ແລະ ແນະນຳ ຕໍ່ບົດສຶກສາຄວາມເປັນໄປໄດ້, ແບບແຜນຜັງ ແລະ ໃບປະເມີນລາຄາ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ ຂອງ ໂຄງການກໍ່ສ້າງລະບົບໂຄງລ່າງນ້ຳປະປາໃນຕົວເມືອງ ທີ່ໃຫ້ການບໍລິການ ແກ່ສັງຄົມ;

6. ປະຕິບັດໜ້າທີ່ອື່ນຕາມການມອບຫມາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ຂອງພະແນກ ສຸຂາພິບານ**

1 ຄົ້ນຄວ້າຫັນແນວທາງ ນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບລະບົບໂຄງລ່າງສຸຂາພິບານຢູ່ຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃນຂອບເຂດທົ່ວປະເທດ ໃຫ້ກາຍເປັນແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດ ໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ແລະ ມີຄຸນນະພາບສູງ;

2 ຄົ້ນຄວ້າຮ່າງ ກົດໝາຍ, ລະບຽບການ, ຂໍ້ກຳນົດກົດລະບຽບ, ການົດໝາຍ ແລະ ມາດຕະຖານເຕັກນິກ ກ່ຽວກັບ ລະບົບໂຄງລ່າງສຸຂາພິບານ ພ້ອມທັງ ໂຄສະນາ ເຜີຍແຜ່ ແລະ ສົ່ງເສີມ ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ເຂົ້າໃນການກໍ່ສ້າງ, ຄຸ້ມຄອງ, ດຳເນີນງານ ແລະ ບົວລະບັດຮັກສາ ລະບົບໂຄງລ່າງ ສຸຂາພິບານ ໃນຕົວ ເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ ໃນຂອບເຂດທົ່ວປະເທດ;

3 ຄຸ້ມຄອງ ໂຄງການກໍ່ສ້າງ, ປັບປຸງ ແລະ ຂະຫຍາຍ ລະບົບໂຄງລ່າງສຸຂາພິບານໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ;

4 ກວດກາ, ປະກອບຄຳເຫັນ ແລະ ແນະນຳ ຕໍ່ບົດສຶກສາຄວາມເປັນໄປໄດ້, ແບບແຜນຜັງ ແລະ ໃບປະ ເມີນລາຄາ, ກຳນົດໝາຍ ແລະ ມາດຕະຖານເຕັກນິກ ຂອງໂຄງການກໍ່ສ້າງລະບົບໂຄງລ່າງສຸຂາພິບານ ໃນຕົວເມືອງ, ຊຸມຊົນ ແລະ ກຸ່ມບ້ານຊົນນະບົດ.

5 ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໂຄງການ ກໍ່ສ້າງ, ປັບປຸງ ແລະ ຂະຫຍາຍ ລະບົບໂຄງລ່າງສຸຂາພິບານ;

6. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະກົມ.

**ມາດຕາ 12 ໜ້າທີ່ຂອງພະແນກ ດັດສົມທຸລະກິດນ້ຳປະປາ**

1 ເປັນກອງເລຂາຄະນະກຳມະການດັດສົມທຸລະກິດນ້ຳປະປາ ແລະ ເປັນເສນາທິການ ໃຫ້ແກ່ກົມ ໃນການ ຫັນແນວທາງ ນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບ ວຽກງານດັດສົມທຸລະກິດນ້ຳປະປາ ແລະ ນ້ຳເປື້ອນ ໃນຂອບເຂດທົ່ວປະເທດ ໃຫ້ ກາຍເປັນ ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດ ໃນແຕ່ ລະໄລຍະ ແລະ ຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ແລະ ມີຄຸນນະພາບສູງ;

2 ທົບທວນ ແລະ ຄົ້ນຄ້ວາ ປັບປຸງ ນະໂຍບາຍ ລາຄານ້ຳປະປາ ແລະ ນ້ຳເປື້ອນ ພ້ອມທັງ ແນະນຳ ການຄິດ ໄລ່ ລາຄາ ນ້ຳປະປາ ແລະ ນ້ຳເປື້ອນ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະ;

3 ຄົ້ນຄວ້າ ຮ່າງລະບຽບການ, ບົດແນະນຳ ແລະ ກຳນົດໝາຍ ທາງດ້ານເຕັກນິກ ແລະ ທາງດ້ານເສດຖະກິດ ກ່ຽວກັບການດຳເນີນທຸລະກິດນ້ຳປະປາ;

4 ເກັບກຳ ຂໍ້ມູນ ແລະ ຂ່າວສານ ທາງດ້ານ ເສດຖະກິດ ແລະ ເຕັກນິກ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ລວມທັງວິໄຈ, ສ້າງ ແລະ ເຜີຍແຜ່ບົດລາຍງານປະຈຳປີ;

5. ສ້າງສະພາບແວດລ້ອມ ທີ່ຊຸກຍູ້ສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ຜູ້ດຳເນີນທຸລະກິດນ້ຳປະປາ ແລະ ສຸຂາພິບານ ສາມາດເຄື່ອນໄຫວທຸລະກິດ ຢ່າງມີປະສິດທິຜົນສູງ ພ້ອມທັງຮັບປະກັນໃຫ້ຜູ້ໃຊ້ບໍລິການ ໄດ້ ຮັບການບໍລິການຢ່າງພຽງພໍ, ມີຄຸນນະພາບ ໃນລາຄາທີ່ສົມເຫດສົມຜົນ;

6 ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5

### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 14 ຫຼັກການ**

ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ,ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມ ຄອງ ແລະ ບົນພື້ນຖານມີການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນ ພ້ອມທັງມອບສິດ ແລະ ຄວາມຮັບຜິດຊອບໃຫ້ສົມເຫດສົມຜົນໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ແຕ່ລະຄົນ;

**ມາດຕາ 15 ແບບແຜນວິທີເຮັດວຽກ**

1 ທຸກການເຄື່ອນໄຫວວຽກງານ ຂອງກົມແມ່ນອີງໃສ່ ຫຼັກການ ແລະ ລະບຽບການຂອງກະຊວງ;

2 ເຮັດວຽກຢ່າງມີ ແຜນການ, ແຜນງານ ແລະ ໂຄງການລະອຽດ; ມີການປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;

3 ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳ ເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານໃຫ້ລັດຖະມົນຕີກະຊວງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16 ງົບປະມານ ແລະ ຕາປະທັບ**

ກົມນ້ຳປະປາ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 17 ການຈັດຕັ້ງປະຕິບັດ**

ກົມນ້ຳປະປາ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**
**ກະຊວງໂຍທາທິການ ແລະ ຂົນສົ່ງ**

ດຣ ບຸນຈັນ ສິນທະວົງ